ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ
# ເຂົ້າຮ່ວມ
# ພິທີເປີດໂຕ ບໍລິສັດ ຄໍ້າປະກັນສິນເຊື່ອລາວ ຈຳກັດຜູ້ດຽວ




ໃນວັນທີ 9 ເມສາ 2026 ທີ່ໂຮງແຮມ ຄຣາວ ພລາຊາ ນະຄອນຫຼວງວຽງຈັນ ທ່ານ ບ. ບຸນຄຳ ວໍລະຈິດ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເຂົ້າຮ່ວມພິທີເປີດໂຕ ບໍລິສັດ ຄໍ້າປະກັນສິນເຊື່ອລາວ ຈຳກັດຜູ້ດຽວ (ບຄຊ) ພ້ອມນີ້ ຍັງມີບັນດາການນຳພັກ-ລັດ, ຕາງໜ້າຈາກກະຊວງ ຂະແໜງການ ທີ່ກ່ຽວຂ້ອງ, ທະນາຄານທຸລະກິດ, ຄູ່ຮ່ວມງານເພື່ອການພັດທະນາ ແລະ ຜູ້ນຳທາງທຸລະກິດ ຫຼາຍທ່ານເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງພິທີໃນຄັ້ງນີ້ ກໍ່ແມ່ນເພື່ອເປັນການເປີດໂຕບໍລິສັດ ຄໍ້າປະກັນສິນເຊື່ອລາວ ຈຳກັດຜູ້ດຽວ ຂຶ້ນຢ່າງເປັນທາງການ ເຊິ່ງບໍລິສັດດັ່ງກ່າວແມ່ນມີຖານະເປັນສະຖາບັນການເງິນໜຶ່ງ ທີ່ຖືກອອກແບບມາເພື່ອຊ່ວຍໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (ຈນກ) ສາມາດເຂົ້າເຖິງເງິນກູ້ຢືມຈາກທະນາຄານ ທີ່ພວກເຂົາເຄີຍພົບຄວາມຫຍຸ້ງຍາກໃນການເຂົ້າເຖິງໃນໄລຍະຜ່ານມາ ພ້ອມທັງ ມີວິໄສທັດ ຫຼື ເປົ້າໝາຍຫຼັກ



ເພື່ອປົດລັອກບັນຫາທີ່ເປັນອຸປະສັກຂອງ ຈຸນລະວິສາຫະກິດ, ວິສາຫະກິດຈະໜາດນ້ອຍ ແລະ ກາງ ໃນການເຂົ້າເຖິງປ່ອຍສິນເຊື່ອ ຍ້ອນຂາດຫຼັກຊັບຄໍ້າປະກັນ. ຊຶ່ງໃນພິທີຍັງໄດ້ໃຫ້ຂໍ້ມູນສຳຄັນແກ່ຜູ້ເຂົ້າຮ່ວມຊາບວ່າ ບຄຊ ແມ່ນກຳເນີດມາຈາກແນວຄວາມຄິດເພື່ອປະກອບສ່ວນເປັນສ່ວນໜຶ່ງໃນການຜັນຂະຫຍາຍວາລະແຫ່ງຊາດເພື່ອແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ (2021-2023) ແລະ ມີການກະກຽມມາຕັ້ງແຕ່ລັດຖະບານໄດ້ອະນຸມັດໃຫ້ສ້າງຕັ້ງໃນເດືອນກໍລະກົດ 2024 ແລະ ບໍລິສັດດັ່ງກ່າວໄດ້ຈົດທະບຽນຢ່າງເປັນທາງການໃນເດືອນທັນວາ 2024 ທີ່ຜ່ານມານີ້ ແລະ ໃນທີ່ສຸດກໍພ້ອມແລ້ວສຳລັບການເປີດໂຕຢ່າງເປັນທາງການ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດຈາກທະນາຄານແຫ່ງ ສປປ ລາວ ໃນເດືອນມີນາ 2026, ພ້ອມທັງ ດຳເນີນງານພາຍໃຕ້ການກວດກາຂອງທະນາຄານແຫ່ງ ສປປ ລາວ ແລະ ຖືຮຸ້ນທັງໝົດໂດຍກະຊວງການເງິນ.

ພ້ອມນີ້, ໃນພິທີທີ່ມີຄວາມໝາຍຄວາມສຳຄັນດັ່ງກ່າວນີ້, ບຄຊ ໄດ້ລົງນາມການເປັນຄູ່ຮ່ວມມືກັບທະນາຄານທຸລະກິດຈຳນວນ 6 ທະນາຄານປະກອບມີ: 1) ທະນາຄານສົ່ງເສີມກະສິກຳ (ວົງເງິນຄໍ້າປະກັນ 200 ຕື້ກີບ), 2) ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) (ວົງເງິນຄໍ້າປະກັນ 50 ຕື້ກີບ), 3) ທະນາຄານ ມາຣູຮານ (Maruhan Bank) (ວົງເງິນຄໍ້າປະກັນ 30 ຕື້ກີບ),4) ທະນາຄານ ບີໄອຊີ (BIC Bank) (ວົງເງິນຄໍ້າປະກັນ 30 ຕື້ກີບ), 5) ທະນາຄານ ອາເຣັສບີ ລາວ (RHB Bank Lao) (ວົງເງິນຄໍ້າປະກັນ 30 ຕື້ກີບ) ແລະ 6) ທະນາຄານ ແຄນນາເດຍ (Canadia Bank) (ວົງເງິນຄໍ້າປະກັນ 30 ຕື້ກີບ) ເຊິ່ງສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນອັນແຮງກ້າຈາກຂະແໜງ ການເງິນ ໃນການສະໜັບສະໜູນການເຂົ້າເຖິງແຫຼ່ງທຶນຂອງ ຈນກ ຜ່ານກົນໄກຂອງ ບຄຊ ອີກດ້ວຍ.




ຂ່າວ-ພາບ: ຫ້ອງການ ທຫລ

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**